ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກຳມະບານ ທຫລ ມອບເງິນຊ່ວຍເຫຼືອ ຜູ້ປະສົບໄພນ້ຳຖ້ວມໃນເຂດພາກກາງ-ໃຕ້




ດ້ວຍຄວາມເປັນຫ່ວງເປັນໄຍຕໍ່ກັບພີ່ນ້ອງທີ່ໄດ້ຮັບຄວາມເດືອດຮ້ອນຈາກນ້ຳຖ້ວມອັນເນື່ອງຈາກມີຝົນຕົກໜັກຕິດຕໍ່ກັນຫຼາຍວັນທີ່ມາຈາກລົມພະຍຸໝູນເຂດຮ້ອນ "ໂພດູ" ແລະ ລົມພະຍຸ ດີເປຣຊັນ "ຄາຈິກິ" ພັດຜ່ານເຂົ້າລາວໃນລະຫວ່າງທ້າຍເດືອນສິງຫາ ຫາຕົ້ນເດືອນກັນຍາ 2019 ອັນໄດ້ສົ່ງຜົນກະທົບຢ່າງໜັກໜ່ວງຕໍ່ຊີວິດການເປັນຢູ່, ຊັບສິນຂອງພໍ່ແມ່ປະຊາຊົນຢູ່ 2 ແຂວງພາກກາງ ແລະ 4 ແຂວງພາກໃຕ້ຊຶ່ງໄດ້ສ້າງຄວາມເສຍຫາຍຕໍ່ຊັບສິນ, ເສຍຊີວິດ-ສູນຫາຍຈຳນວນໜຶ່ງ, ພື້ນທີ່ທຳມາຫາກິນຂອງປະຊາຊົນ, ອາຄານບ້ານເຮືອນ, ໂຮງໝໍ-ສຸກສາລາ, ໂຮງຮຽນ, ຊົນລະປະທານ, ຂົວ, ຖະໜົນຫົນທາງ, ແຫຼ່ງນ້ຳກິນ-ນ້ຳໃຊ້ ແລະອື່ນໆ ເປັນຈຳນວນຫຼວງຫຼາຍ.

ໃນຕອນເຊົ້າຂອງວັນທີ 13 ກັນຍາ 2019 ຜ່ານມາທີ່ສຳນັກງານສູນກາງສະຫະພັນກຳມະບານລາວ, ສະຫະພັນກຳມະບານທະນາຄານແຫ່ງ ສປປ ລາວ ຊຶ່ງນຳໂດຍສະຫາຍນາງ ຂັນແກ້ວ ຫຼ້າມະນີເງົາ ຄະນະພັກ, ປະທານສະຫະພັນກຳມະບານທະນາຄານແຫ່ງ ສປປ ລາວ ພ້ອມຄະນະ ໄດ້ນຳເອົາວັດຖຸປັດໃຈທີ່ລະດົມຈາກສະມາຊິກກຳມະບານໃນທົ່ວຂະແໜງການທະນາຄານເພື່ອປະກອບສ່ວນຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມຢູ່ບັນດາແຂວງພາກກາງ ແລະ ພາກໃຕ້ມີແຂວງສະຫວັນນະເຂດ, ຄຳມ່ວນ, ຈຳປາສັກ, ສາລະວັນ, ອັດຕະປື ແລະ ເຊກອງ ແລະ ການມອບ-ຮັບໃນຄັ້ງນີ້ຕາງໜ້າສະຫະພັນກຳມະບານທະນາຄານແຫ່ງ ສປປ ລາວ ກ່າວມອບໂດຍສະຫາຍນາງ ຂັນແກ້ວ ຫຼ້າມະນີເງົາ ປະທານສະຫະພັນກຳມະບານທະນາຄານແຫ່ງ ສປປ ລາວ ແລະ ຮັບໂດຍສະຫາຍນາງ ອາລີ ວົງໜໍ່ບຸນທຳ ຄະນະພັກ, ຮອງປະທານຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວຊຶ່ງເປັນເງິນທັງໝົດ 20.000.000 ກີບ ເພື່ອນຳໄປຈັດຊື້ເຄື່ອງອຸປະໂພກ-ບໍລິໂພກ ເພື່ອຊ່ວຍເຫຼືອ ແລະ ປະກອບສ່ວນເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບກັບຄືນສູ່ສະພາບປົກກະຕິເປັນກ້າວໆ. ນອກຈາກນັ້ນ ບັນດາຮາກຖານກຳມະບານທີ່ຂຶ້ນກັບສະຫະພັນກຳມະບານ ທະນາຄານແຫ່ງ ສປປ ລາວ ຍັງຈະສືບຕໍ່ປຸກລະດົມປັດໃຈຈາກບັນດາສະມາຊິກກຳມະບານ ແລະ ພະນັກງານໃນທົ່ວຂະແໜງການ ປະກອບສ່ວນຊ່ວຍເຫຼືອຕື່ມອີກຕາມເງື່ອນໄຂຕົວຈິງ.




ໃນໂອກາດດັ່ງກ່າວ, ສະຫາຍຮອງປະທານຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ໄດ້ຕີລາຄາສູງຕໍ່ກັບນ້ຳໃຈສາມັກຄີ, ນ້ຳໃຈແຫ່ງຄວາມເອື້ອເຟື້ອເພື່ອແຜ່ ແລະ ເປັນຈິດໜຶ່ງໃຈດຽວຂອງຄະນະນຳ ແລະ ສະມາຊິກກຳມະບານໃນທົ່ວຂະແໜງການທະນາຄານທີ່ໄດ້ປະກອບສ່ວນຊ່ວຍເຫຼືອໃນຄັ້ງນີ້ ຊຶ່ງໃນທີ່ຜ່ານມາສະຫະພັນກຳມະບານທະນາຄານແຫ່ງ ສປປ ລາວ ກໍ່ໄດ້ໃຫ້ການຊ່ວຍເຫຼືອອັນລ້ຳຄ່າຕໍ່ສັງຄົມ ແລະ ຢືນຢັນວ່າ: ຈະນຳເອົາວັດຖຸປັດໃຈເຫຼົ່ານີ້ ໄປຊ່ວຍເຫຼືອປະຊາຊົນທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດໃນຂັ້ນຕໍ່ໄປ.

**# ຂ່າວ: ຣັດສະໝີ ດວງສັດຈະ**

**#ພາບ: ສົມຜົດ ທຳມະວົງ**

# ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ